ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 02 ຫາ 06 ຕຸລາ 2023



ຜູ້ໃຫ້ທຶນ IFAD ພ້ອມດ້ວຍທີມງານລົງຕິດຕາມຊຸກຍູ້ໂຄງການ AFN 2
ຢູ່ເມືອງ ດາກຈຶງ, ແຂວງ ເຊກອງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້





# ຜູ້ໃຫ້ທຶນ (IFAD) ພ້ອມດ້ວຍທີມງານລົງຕິດຕາມ ຊຸກຍູ້ ໂຄງການ AFN 2 ຢູ່ເມືອງ ດາກຈຶງ, ແຂວງ ເຊກອງ

ໃນວັນທີ 12 ຕຸລາ 2023 ຜ່ານມາ, ຄະນະຊຸກຍູ້ຕິດຕາມ ກວດກາ ໂຄງການກະສິກຳເພື່ອໂພຊະນາການ ໄລຍະ 2 (AFN 2) ນຳໂດຍ ທ່ານ ສຸລິວັນ ປັດຕິວົງ ຫົວໜ້າຫ້ອງການ ອົງການກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ປະຈຳລາວ ໂດຍການຕ້ອນຮັບຂອງທ່ານ ໄພສະໝອນ ໄອ່ແກ້ວ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ດາກຈຶງ. ມີທີ່ປຶກສາດ້ານວິຊາການ ເສດຖະກິດກະສິກຳ, ຊ່ຽວຊານຈາກອົງການອາຫານໂລກ, ຕາງໜ້າຈາກກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ຜູ້ປະສານງານໂຄງການຂັ້ນສູນກາງ, ເມືອງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນ. ບົວສອນ ກິນດາລາ ຮອງຜູ້ປະສານງານໂຄງການ ເມືອງ ດາກຈຶງ ໄດ້ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຄື: ສະເພາະເມືອງ ດາກຈຶງ ມີທັງໝົດ 25 ບ້ານເປົ້າໝາຍ ຄາດຄະເນຜູ້ໄດ້ຮັບປະໂຫຍດ 10.964 ຄົນ, ໃນນັ້ນ ຍິງ 5.493 ຄົນ (ລວມມີ 1.624 ຄອບຄົວ ໃນນັ້ນມີຄອບຄົວທຸກຍາກ 1.620 ຄອບຄົວ ເທົ່າກັບ 99,75%). ຈຸດປະສົງຂອງໂຄງການ ແມ່ນເພື່ອເຮັດໃຫ້ 10.964 ຄົນ ທີ່ມີຄວາມສ່ຽງໃນເຂດເປົ້າໝາຍໂຄງການໄດ້ຮັບການປັບປຸງໃຫ້ມີລາຍຮັບເພີ່ມຂຶ້ນ 20% ໃນປີ 2030 (ທຽບໃສ່ຕອນເລີ່ມໂຄງການ) ແລະ ໄດ້ຮັບການປັບປຸງ, ຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ລວມທັງເພີ່ມລາຍຮັບຂອງກຸ່ມເປົ້າໝາຍໃຫ້ສູງຂຶ້ນ. ຜ່ານການຈັດຕັ້ງປະຕິບັດໂຄງການ ເລີ່ມແຕ່ເດືອນກໍລະກົດ ຫາ ກັນຍາ 2023 ມີຜົນສຳເລັດຄື: ສຳເລັດການສະເໜີແຕ່ງຕັ້ງ ອອກຂໍ້ຕົກລົງຄະນະຊີ້ນຳໂຄງການຂັ້ນເມືອງ; ສຳເລັດການປະສານງານແຕ່ງຕັ້ງຜູ້ປະສານງານຂອງບັນດາຂະແໜງການ



ອ້ອມຂ້າງ; ສຳເລັດການເປີດບັນຊີເພື່ອຮອງຮັບທຶນ ຈຳນວນ 02 ບັນຊີ; ສຳເລັດການສະເໜີແຕ່ງຕັ້ງ ຄະນະກຳມະການງົບປະມານ, ຈັດຊື້-ຈັດຈ້າງ ຂັ້ນເມືອງ. ນອກຈາກນີ້ ໄດ້ລາຍງານກ່ຽວກັບແຜນວຽກ ຈຸດສຸມໃນ 3 ເດືອນທ້າຍປີ 2023 ໂດຍສະເພາະແມ່ນ ສືບຕໍ່ວຽກງານການກະກຽມຈັດຊື້ອຸປະກອນ ທີ່ຈຳເປັນ (ເຄື່ອງໃຊ້ຫ້ອງການ); ວຽກງານຈັດຈ້າງພະນັກງານຊ່ວຍວຽກ (ບາງຕຳແໜ່ງ); ສືບຕໍ່ວາງແຜນພັດທະນາແບບມີສ່ວນຮ່ວມຢູ່ຂັ້ນບ້ານ ເປົ້າໝາຍ 10 ບ້ານ ເພື່ອວາງແຜນກິດຈະກຳ ມາໃສ່ແຜນປີ 2024. ສຳລັບພາກສະເໜີຂອງເມືອງ ໃນຕໍ່ໜ້າ ສະເໜີໃຫ້ມີການຈັດຝຶກອົບຮົມວຽກງານ ການເງິນ, ວຽກງານການຈັດຊື້-ຈັດຈ້າງ, ຝຶກອົບຮົມ ກ່ຽວກັບວຽກງານການວາງແຜນ, ວຽກງານຕິດຕາມ ປະເມີນຜົນ ລວມທັງງົບປະມານໃນການຈັດຕັ້ງປະຕິບັດວຽກງານ. ໃນທີ່ປະຊຸມ ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນ ແລກປ່ຽນ ບົດຮຽນຢ່າງກົງໄປກົງມາ ເພື່ອກະກຽມຄວາມພ້ອມ ໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການໃຫ້ໄດ້ຕາມແຜນທີ່ກຳນົດໄວ້. ພ້ອມນີ້, ຄະນະທີມງານ ໄດ້ສືບຕໍ່ລົງພື້ນທີ່ພົບປະພໍ່ແມ່ປະຊາຊົນ ພາຍໃນບ້ານ ດາກຢາງ ຊຶ່ງເປັນບ້ານທີ່ນອນຢູ່ໃນເປົ້າໝາຍ ຂອງໂຄງການ ອີກດ້ວຍ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;